**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

----1583

ເລກທີ.................ພອຄ.ນວ.ຂນອ

ວັນທີ 27 ສິງຫາ 2024

# ບົດລາຍງານ

ຂາເຂົ້າ
ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 4599
ວັນທີ: 8.10.24

**ຮຽນ:** ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ທີ່ເຄົາລົບນັບຖືຢ່າງສູງ.

**ເລື່ອງ:** ລາຍງານການລົງເກັບກຳຂໍ້ມູນດິນລັດຂອງນະຄອນຫຼວງວຽງຈັນ ທີ່ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ສະເໜີຂໍນຳໃຊ້ພັດທະນາ ຢູ່ບ້ານໂພຄຳ, ເຂດຫຼັກ 16 ເມືອງໄຊທານີ, ນະຄອນຫຼວງວຽງຈັນ ເຊິ່ງມີເນື້ອທີ່ດິນຈຳນວນ 28,439 ຕາແມັດ.

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ສະບັບເລກທີ 196/ຈນວ, ລົງວັນທີ 24/02/2023;
- ອີງຕາມໜັງສືທາງລັດຖະການສະບັບເລກທີ 866/ຫວນວ, ລົງວັນທີ 25 ພຶດສະພາ 2024;
- ອີງຕາມບົດບັນທຶກກອງປະຊຸມຄັ້ງວັນທີ 15/07/2024 ແລະ ບົດບັນທຶກກອງປະຊຸມຄັ້ງວັນທີ 19/07/2024.
- ອີງຕາມໜັງສືສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ສະບັບເລກທີ 041/ສຄອ.ນວ, ລົງວັນທີ 31/07/2024

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດລາຍງານມາຍັງທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ຊາບກ່ຽວກັບການສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ເພື່ອຂໍນຳໃຊ້ດິນລັດໃນຮູບແບບນຳໃຊ້ຮ່ວມກັນເປັນສ່ວນລວມ ແລະ ສາມາດຮັບຮອງກິດຈະກຳຕ່າງໆຂອງພາກລັດ ໂດຍສະເພາະແມ່ນສ້າງເປັນຫ້ອງການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ, ສູນຝຶກອົບຮົມສີມືແຮງງານ ພ້ອມສູນກວດສອບສີມືແຮງງານ, ສ້າງຫໍພັກສຳລັບແຮງງານທີ່ມາຈາກຕ່າງແຂວງ, ສ້າງຫ້ວງສະແດງສິນຄ້າໂອດ້ອບຂອງຜູ້ປະກອບການນະຄອນຫຼວງວຽງຈັນ, ສ້າງສູນວາງສະແດງ ແລະ ຂາຍສິນຄ້າ, ສ້າງຮ້ານອາຫານ-ກາເຟ ແລະ ອື່ນໆ; ເຊິ່ງຕອນດິນດັ່ງກ່າວຕັ້ງຢູ່ບ້ານໂພຄຳ, ເຂດຫຼັກ 16 ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ເຊິ່ງມີເນື້ອທີ່ດິນທັງໝົດຈຳນວນ 28,439 ຕາແມັດ.

ຕາມການຄົ້ນຄວ້າເອກະສານ ແລະ ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງພາກລັດ ລົງສຳຫຼວດເກັບກຳຂໍ້ມູນໂຕຈິງເຫັນວ່າຕອນດິນດັ່ງກ່າວແມ່ນເປັນດິນທີ່ ນະຄອນຫຼວງວຽງຈັນ ເປັນຜູ້ຄຸ້ມຄອງ ແຕ່ຍັງບໍ່ທັນອອກເປັນໃບຕາດິນລັດເທື່ອ, ໃນຕອນດິນດັ່ງກ່າວນີ້ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ນຳໃຊ້ແລ້ວຈຳນວນ 4,301 ຕາແມັດ ແລະ ມີທ່ານ ຄຳແສນ ພົນສົງຄາມ ໄດ້ປຸກສ້າງເຮືອນທີ່ຢູ່ອາໄສສຳເລັດແລ້ວ ເຊິ່ງມີເນື້ອທີ່ດິນປະມານ 1,600 ຕາແມັດ ເຊິ່ງຍັງບໍ່ທັນມີເອກະສານຢັ້ງຢືນກ່ຽວຂ້ອງກັບຕອນດິນຕອນດັ່ງກ່າວ.

ຕາມການຄົ້ນຄວ້າເອກະສານຂອງວິຊາການພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເຫັນວ່າຕອນດິນຈຸດດັ່ງກ່າວນີ້ໄດ້ມີການແບ່ງປັນໃຫ້ພາກສ່ວນລັດນຳໃຊ້ຢ່າງຊັບຊ້ອນກັນຫຼາຍພາກສ່ວນ ແຕ່ທາງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງໄຊທານີ ກໍ່ຢັ້ງຢືນວ່າຍັງບໍ່ທັນໄດ້ອອກເອກະສານເປັນລາຍລັກອັກສອນໃຫ້ພາກສ່ວນໃດນຳໃຊ້ (ນອກຈາກພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ), ໃນກອງປະຊຸມຄັ້ງວັນທີ 19/07/2024 ໄດ້ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເອົາຂໍ້ມູນໂຕຈິງພ້ອມແຕ້ມແຜນວາດຕອນດິນດັ່ງກ່າວມາຄັດຕິດໃສ່ໃນບົດລາຍງານ ມາຮອດປະຈຸບັນຍັງບໍ່ທັນມີການຢັ້ງຢືນມາເປັນລາຍລັກອັກສອນເທື່ອ.

**ທັດສະນະທາງດ້ານວິຊາການຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ**

1. ຕອນດິນດັ່ງກ່າວເຫັນວ່າມີພື້ນທີ່ກວ້າງຂວາງສົມຄວນ ເໝາະແກ່ການພັດທະນາຕາມໜັງສືສະເໜີຂອງສະພາການຄ້າ ແລະ ອຸດສາຫະກຳ ທີ່ສະເໜີມາ, ຄະນະກຳມະການຂະແໜງການກ່ຽວຂ້ອງແມ່ນເຫັນສະໜັບສະໜູນຊຸກຍູ້ວຽກງານດັ່ງກ່າວໃຫ້ໄດ້ຈັດຕັ້ງປະຕິບັດສຳເລັດໂດຍໄວ ແລະ ເຫັນດີລາຍງານການນຳນະຄອນຫຼວງວຽງຈັນ ພິຈາລະນາ ໃຫ້ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ນຳໃຊ້ໄດ້ຄືກັນກັບດິນສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວຢູ່ຫຼັກ 6.

2. ກ່ຽວກັບທ່ານ ຄຳແສນ ພົນສີງາມ ໄດ້ປຸກສ້າງໃສ່ໃນເນື້ອທີ່ 1,600 ຕາແມັດ ເຫັນວ່າຍັງບໍ່ທັນມີຂໍ້ຕົກລົງມອບດິນຕອນດັ່ງກ່າວໃຫ້ຜູ້ກ່ຽວ, ຄວນມີການກວດສອບຂໍ້ມູນລະອຽດຕື່ມ ເພາະມີທາງສຽງສັງຄົມວ່າ: ຍົກຍ້າຍໃຫ້ປະຊາຊົນອອກແລ້ວໃຫ້ບຸກຄົນເຂົ້າມາພັດທະນາໃສ່.

3. ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເຫັນວ່າການຂໍນຳໃຊ້ດິນລັດໃນການລົງທຶນດັ່ງກ່າວຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ເຫັນມີຄວາມຈຳເປັນຍ້ອນວ່າສຳນັກງານຖາວອນແມ່ນຍັງບໍ່ທັນມີ, ປະຈຸບັນຍັງຢູ່ຮ່ວມກັບພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ; ເປັນການພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດລວມຂອງນະຄອນຫຼວງວຽງຈັນ ຊຶ່ງແມ່ນສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ເປັນຜູ້ລົງທຶນພັດທະນາຕາມແຜນຂອງໂຄງການທີ່ໄດ້ກຳນົດໄວ້.

**<u>ພາກສະເໜີ:</u>** ເນື່ອງຈາກວ່າດິນຕອນດັ່ງກ່າວແມ່ນເປັນດິນຂອງນະຄອນຫຼວງວຽງຈັນ ຈຶ່ງສະເໜີຂໍໃຫ້ແຕ່ງຕັ້ງຄະນະກຳມະການເພື່ອລົງເລິກຂໍ້ມູນດິນດັ່ງກ່າວໃຫ້ມີຄວາມຊັດເຈນ ກ່ຽວກັບການອະນຸຍາດໃຫ້ນຳໃຊ້ໃນໄລຍະຜ່ານມາ.

ດັ່ງນັ້ນ; ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າພະແນກ**

ກະຊວງອຸດສາຫະກຳ ແລະ ການຄ້າ
ພະແນກ ອຸດສາຫະກຳ ແລະ ການຄ້າ
ນະຄອນຫຼວງວຽງຈັນ

**ນ. ວັນມະນີ ພົມມະສານ**